Lao - ເລີ່ມຕົ້ນ ສົງຄາມຕ້ານວິນຍານ ການອະທິຖານ ພຣະຄຳພີ

- Beginning WP Scriptures

ການສາລະພາບ ການອະທິຖານ ພຣະຄຳພີ - Confession Scriptures

ເອັຊຣາ 9:7 ຂ້າພຣະອົງທັງຫລາຍມີກັມຊົ່ວຍິ່ງໃຫຍ່ຕັ້ງແຕ່ສະໄຫມບັນພະບຸຣຸດຂອງຂ້າພຣະ ອົງທັງຫລາຍ ຈົນເຖິງທຸກວັນນີ້ ແລະເພາະຄວາມບາບຊົ່ວຂອງຂ້າພຣະອົງທັງຫລາຍ ຂ້າ ພຣະອົງທັງຫລາຍ ທັງບັນດາພຣະຣາຊາຂອງຂ້າພຣະອົງ ແລະບັນດາປະໂຣຫິດຂອງຂ້າ ພຣະອົງທັງຫລາຍໄດ້ຖືກມອບໄວ້ໃນມືຂອງບັນດາພຣະຣາຊາແຫ່ງແຜ່ນດິນເຫລົ່ານັ້ນ ໃຫ້ແກ່ດາບ ແກ່ການເປັນຊະເລີຍ ແກ່ການ

ເອັຊຣາ 9:13 ແລະເມື່ອຂ້າພຣະອົງທັງຫລາຍຮັບໂທດເພາະການຊົ່ວຮ້າຍຂອງຂ້າພຣະອົງ ແລະເພາະກັມຊົ່ວໃຫຍ່ຍິ່ງຂອງຂ້າພຣະອົງ ແລະເມື່ອພຣະອົງ ຄືພຣະເຈົ້າຂອງຂ້າພຣະອົງ ທັງຫລາຍໄດ້ຊົງລົງໂທດຂ້າພຣະອົງ ເຫດຄວາມບາບຊົ່ວຂອງຂ້າພຣະອົງນ້ອຍກວ່າທີ່ ຄວນຈະໄດ້ຮັບ ແລະຊົງປະທານຄົນທີ່ເຫລືອຢູ່ແກ່ຂ້າພຣະອົງທັງຫລາຍຢ່າງນີ້

ເນເຫມີ 9:2 ຄົນອິສຣາເອນໄດ້ແຍກຕົນອອກຈາກຊົນຕ່າງຊາດ ແລະຢືນສາຣະພາບ ບາບຂອງຕົນ ແລະສາຣະພາບກັມຊົ່ວແຫ່ງບັນພະບຸຣຸດຂອງເຂົາ

ເພງສັຣເສີນ 24:3,4 ຜູ້ໃດອາດຂຶ້ນໄປເທິງພູສູງຂອງພຣະຜູ້ເປັນເຈົ້າໄດ້ ຜູ້ໃດມີອະນຸຍາດເຂົ້າ ໄປໃນພຣະວິຫານອັນບໍຣິສຸດຂອງພຣະອົງໄດ້ 4 ຜູ້ນັ້ນຕ້ອງເປັນຄົນຂາວສະອາດທັງການ ກະທຳແລະຄວາມຄິດ ແລະເປັນຜູ້ທີ່ບໍ່ຍອມນະມັສການຮູບເຄົາຣົບ ຫລືບໍ່ຕັ້ງຄຳສັນຍາ ເທັດ

ເພງສັຣເສີນ 73:13 ການທີ່ຂ້າພຣະອົງທຳຕົນໃຫ້ບໍຣິສຸດ ແລະລ້າງມືໃຫ້ສະອາດຈາກຄວາມ ຜິດນັ້ນ ຈະບໍ່ມີປໂຍດຫຍັງບໍ່?

ເອຊາຢາ 59:2 ແຕ່ວ່າຄວາມບາບຊົ່ວຂອງເຈົ້າທັງຫລາຍໄດ້ກະທຳໃຫ້ເກດີການແຍກລະ ຫວ່າງເຈົ້າກັບພຣະເຈົ້າຂອງເຈົ້າ ແລະບາບຂອງເຈົ້າທັງຫລາຍໄດ້ບັງພຣະພັກຂອງ

ພຣະອົງເສັງຈາກເຈົ້າ ພຣະອົງຈຶ່ງບໍ່ໄດ້ຍິນ

ເອຊາຢາ 64:6 ຂ້າພຣະອົງທຸກຄົນໄດ້ກາຍເປັນເຫມືອນຄົນທີ່ບໍ່ສະອາດ ແລະການກະທຳອັນ ຊອບທັມຂອງຂ້າພຣະອົງທັງສິ້ນເຫມືອນເສື້ອຜ້າທີ່ເປື້ອນເປີ ຂ້າພຣະອົງທຸກຄົນຫ່ຽວລົງ ຢ່າງໃບໄມ້ ແລະຄວາມບາບຜິດຂອງຂ້າພຣະອົງທັງຫລາຍໄດ້ພັດພາຂ້າພຣະອົງໄປ ເຫມືອນລົມ

ເຢເຣມີ 5:25 ບາບຊົ່ວຂອງເຈົ້າໄດ້ກະທຳໃຫ້ສິ່ງເຫລົ່ານີ້ຫັນໄປເສັງ ແລະບາບຂອງເຈົ້າທັງ ຫລາຍກໍກັນຄວາມດີໄວ້ເສັງຈາກເຈົ້າ

ໂຮເຊອາ 13:8 ຈະຄຸບພວກເຈົ້າເຫມືອນຫມີທີ່ສູນເສັງລູກຂອງມັນ ຈະຈີກກິນພວກເຈົ້າທັນ ທີເຫມືອນສິງ ແລະຈະຈີກພວກເຈົ້າອອກເປັນຕ່ອນໆເຫມືອນສັດປ່າຈີກ

ດານີເອນ 9:8,9 ຂ້າແດ່ພຣະຜູ້ເປັນເຈົ້າ ພວກກະສັດ ພວກຜູ້ປົກຄອງ ແລະບັນພະບຸຣຸດ ຂອງພວກຂ້າພຣະອົງໄດ້ກະທຳສິ່ງທີ່ຫນ້າອັບອາຍແລະສິ່ງທີ່ເປັນບາບຕໍ່ ສູ້ພຣະອົງ 9 ພຣະອົງຊົງເມດຕາແລະຊົງໃຫ້ອະພັຍ ແຕ່ພວກຂ້າພຣະອົງໄດ້ກະບົດຕໍ່ສູ້ພຣະອົງ

ມາຣະໂກ 9:24 ໃນທັນໃດນັ້ນພໍ່ຂອງເດັກນ້ອຍກໍຮ້ອງທູນຂຶ້ນວ່າ, “ເຊື່ອແລ້ວຂ້ານ້ອຍ ທີ່ຂ້າ ນ້ອຍຍັງຂາດຄວາມເຊື່ອນັ້ນ ຂໍໂຜດຊ່ວຍຂ້ານ້ອຍແດ່ທ້ອນ”

ລູກາ 11:2 ພຣະອົງຊົງກ່າວກັບເຂົາວ່າ, “ເມື່ອພວກທ່ານອ້ອນວອນຈົ່ງກ່າວວ່າ, “ຂ້າແດ່ພຣະ ບິດາ ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ເຄົາຣົບບູຊາ ຂໍໃຫ້ພຣະຣາຊອານາຈັກຂອງພຣະ ອົງມາຕັ້ງຢູ່ (ມັດທາຍ 6:10)

ໂຍຮັນ 14:6 ພຣະເຍຊູຊົງຕອບເຂົາວ່າ, “ເຮົານີ້ແຫລະ, ເປັນທາງນັ້ນ ເປັນຄວາມຈິງ ແລະ ເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກຈະມາທາງເຮົາ

ໂຍຮັນ 17:15 ຂ້າພຣະອົງບໍ່ໄດ້ຂໍພຣະອົງເອົາເຂົາອອກຈາກໂລກນີ້ ແຕ່ໄດ້ຂໍຮັກສາເຂົາໄວ້ໃຫ້ ພົ້ນຈາກມານຮ້າຍ

ຢາໂກໂບ 4:8 ເຈົ້າທັງຫລາຍຈົ່ງເຂົ້າໃກ້ພຣະເຈົ້າ ແລະພຣະອົງຈະສະເດັດມາໃກ້ພວກເຈົ້າ ຄົນ ບາບທັງຫລາຍເອີຍ, ຈົ່ງຊຳຣະມືໃຫ້ສະອາດ ແລະຄົນສອງໃຈຈົ່ງຊຳຣະໃຈຂອງຕົນໃຫ້ບໍຣິ ສຸດ

ໂຣມ 6:12-14 ເຫດສັນນັ້ນ, ຕໍ່ໄປຢ່າໃຫ້ຄວາມຜິດບາບປົກຄອງຮ່າງກາຍທີ່ຕ້ອງຕາຍຂອງ

ເຈົ້າທັງຫລາຍ ຊຶ່ງເຮັດໃຫ້ຕ້ອງເຊື່ອຟັງຕັນຫາຂອງກາຍນັ້ນ 13 ຢ່າມອບອະວັຍວະຂອງ
ພວກເຈົ້າໃຫ້ແກ່ຄວາມຜິດບາບຕໍ່ໄປ ເພື່ອໃຫ້ເປັນເຄື່ອງໃຊ້ໃນການອະທັມ ແຕ່ຈົ່ງມອບ
ຕົວຂອງເຈົ້າຖວາຍແກ່ພຣະເຈົ້າເປັນການສິ້ນສຸດ ເຫມືອນກັບບຸກຄົນທີ່ເປັນຂຶ້ນມາ
ຈາກຄວາມຕາຍແລ້ວ ແລະຈົ່ງມອບອະວັຍວະຂອງເຈົ້າຖວາຍແກ່ພຣະເຈົ້າເປັນການສິ້ນ
ສຸດ ເພື່ອເປັນເຄື່ອງໃຊ້ໃນການຊອບທັມຕໍ່ໄປ 14 ດ້ວຍວ່າຕໍ່ໄປຄວາມຜິດບາບຈະບໍ່ບັງ
ຄັບພວກເຈົ້າອີກ ເພາະວ່າເຈົ້າທັງຫລາຍບໍ່ໄດ້ຢູ່ໃຕ້ພຣະບັນຍັດແຕ່ຢູ່ໃຕ້ພຣະຄຸນ
ເຮັບເຣີ 9:28 ພຣະຄຣິດກໍສັນນັ້ນ ຄືພຣະອົງຊົງຖວາຍພຣະອົງເອງເປັນເຄື່ອງບູຊາເທື່ອດຽວ
ເພື່ອແບກບາບຂອງຄົນຈຳນວນຫລາຍໄວ້ ພຣະອົງຈະຊົງປາກົດເປັນເທື່ອທີ່ສອງ ໂດຍບໍ່
ກ່ຽວກັບບາບ ແຕ່ເພື່ອໂຜດບັນດາຜູ້ທີ່ລໍຄອຍພຣະອົງດ້ວຍໃຈຮ້ອນຮົນ ໃຫ້ໄດ້ຮັບ
ຄວາມພົ້ນ
1 ໂຍຮັນ 1:9 ຖ້າເຮົາທັງຫລາຍສາຣະພາບຜິດບາບຂອງພວກເຮົາ ພຣະອົງຊົງສັດຊື່ແລະ
ທ່ຽງທັມ ຈະຊົງໂຜດຍົກບາບຂອງພວກເຮົາ ແລະຈະຊົງໂຜດຊຳຣະລ້າງເຮົາທັງຫລາຍ
ຈາກການອະທັມຫມົດສິ້ນ

ການໃຫ້ອະໄພ ການອະທິຖານ ພຣະຄຳພີ - Forgiveness Scriptures

ມັດທາຍ 6:12-15 ຂໍຊົງໂຜດຍົກໂທດໃຫ້ຂ້າພຣະອົງ ເຫມືອນຂ້າພຣະອົງຍົກໂທດໃຫ້ແກ່ຜູ້ທີ່
ເຮັດຜິດຕໍ່ຂ້າພຣະອົງນັ້ນ 13 ແລະຂໍຢ່າພາຂ້າພຣະອົງເຂົ້າໄປໃນການທົດລອງ ແຕ່ຂໍຊົງ
ໂຜດໃຫ້ພົ້ນຈາກການຊົ່ວຮ້າຍ (ເຫດວ່າຣາຊອານາຈັກ, ຣິດອຳນາດ, ແລະພຣະຣັສມີກໍ
ເປັນຂອງພຣະອົງສືບໆ ໄປເປັນນິດ ອາແມນ) 14 ເພາະວ່າຖ້າວ່າທ່ານຍົກຄວາມຜິດຂອງ
ເພື່ອນມະນຸດ ພຣະບິດາຂອງທ່ານຜູ້ຊົງສະຖິດໃນສວັນຈະຊົງໂຜດຍົກຄວາມຜິດຂອງ
ທ່ານດ້ວຍ 15 ແຕ່ຖ້າທ່ານບໍ່ຍົກຄວາມຜິດຂອງເພື່ອນມະນຸດ ພຣະບິດາຂອງທ່ານກໍຈະ
ບໍ່ຊົງໂຜດຍົກຄວາມຜິດຂອງທ່ານເຫມືອນກັນ
ມັດທາຍ 18:21,22 ເມື່ອນັ້ນເປໂຕໄດ້ມາທູນຖາມພຣະອົງວ່າ, “ນາຍເອີຍ, ຖ້າພີ່ນ້ອງຂອງຂ້າ

ພຣະອົງເຮັດຜິດຕໍ່ຂ້າ ພຣະອົງຫລາຍເທື່ອ ຂ້າພຣະອົງຕ້ອງຍົກຜິດໃຫ້ເຂົາເຖິງຈັກເທື່ອ ເຖິງເຈັດເທື່ອຫລື” 22 ພຣະເຢຊູຊົງຕອບວ່າ, “ເຮົາບໍ່ໄດ້ບອກພຽງເຈັດເທື່ອເທົ່ານັ້ນ ແຕ່ເຖິງເຈັດສິບເທື່ອຄູນກັບເຈັດ

ມັດທາຍ 18:35 ຢ່າງນັ້ນແຫລະ, ພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສວັນ ກໍຈະເຮັດດັ່ງນັ້ນແກ່ພວກທ່ານທຸກຄົນ ຖ້າພວກທ່ານບໍ່ຍົກຄວາມຜິດໃຫ້ພີ່ນ້ອງຂອງຕົນດ້ວຍສຸດໃຈ”

ມາຣະໂກ 11:25,26 ເມື່ອທ່ານຢືນອ້ອນວອນຢູ່ ຖ້າມີເຫດກັບຜູ້ນຶ່ງຜູ້ໃດ ຈົ່ງນຶກອະພັຍໂທດໃຫ້ຜູ້ນັ້ນເສັຍ ເພື່ອພຣະບິດາຂອງທ່ານຜູ້ຊົງສະຖິດຢູ່ໃນສວັນ ຈະຊົງຍົກຄວາມຜິດຂອງທ່ານດ້ວຍ 26 (ແຕ່ຖ້າທານບໍ່ຍົກໂທດນັ້ນ ພຣະບິດາຂອງທ່ານຜູ້ຊົງສະຖິດຢູ່ໃນສວັນກໍຈະບໍ່ຍົກຄວາມຜິດຂອງທ່ານເຫມືອນກັນ)”

ລູກາ 6:37 “ຢ່າກ່າວໂທດໃສ່ເຂົາແລະພຣະເຈົ້າຈະບໍ່ຊົງກ່າວໂທດໃສ່ທ່ານ ຢ່າທຳໂທດເຂົາແລະພຣະເຈົ້າຈະບໍ່ຊົງທຳໂທດທ່ານ ຈົ່ງຍົກໂທດໃຫ້ເຂົາແລະພຣະເຈົ້າຈະຊົງຍົກໂທດໃຫ້ທ່ານ

ລູກາ 11:4 ຂໍຊົງໂຜດຍົກຜິດບາບຂອງຂ້າພຣະອົງທັງຫລາຍ ດ້ວຍວ່າຂ້າພຣະອົງຍົກຄວາມຜິດບາບຂອງທຸກຄົນທີ່ເຮັດຜິດຕໍ່ຂ້າພຣະອົງນັ້ນ ຂໍຢ່າຊົງພາກຂ້າພຣະອົງທັງຫລາຍ ເຂົ້າໄປໃນການທົດລອງ”

ລູກາ 17:3,4 ຈົ່ງລະວັງໃຫ້ດີ “ຖ້າພີ່ນ້ອງເຮັດຜິດບາບ ຈົ່ງຕິຕຽນເຂົາ ຖ້າເຂົາຫລົບຕັ້ງໃຈໃຫມ່ ຈົ່ງຍົກໂທດໃຫ້ເຂົາ 4 ຖ້າແມ່ນເຂົາເຮັດຜິດຕໍ່ທ່ານວັນລະເຈັດເທື່ອ ແລະກັບມາຫາທ່ານທັງເຈັດເທື່ອນັ້ນ ແລ້ວເວົ້າວ່າ, “ເຮົາກົນແຫນງຕັ້ງໃຈໃຫມ່ແລ້ວ” ຈົ່ງຍົກໂທດໃຫ້ເຂົາ”

ລູກາ 23:34 ຝ່າຍພຣະເຢຊູຈຶ່ງຊົງອ້ອນວອນว่า, “ໂອ ພຣະບິດາເຈົ້າ, ຂໍໂຜດອະພັຍໂທດເຂົາ ເພາະວ່າເຂົາບໍ່ຮູ້ຈັກว่าเขากำลังเรัดอันใด” ແລ້ວເຂົາໄດ້ເອົາເຄື່ອງທົ່ງຂອງພຣະອົງໄປ ຈົກສລາກແບ່ງປັນກັນ

ກິຈການ 8:22 ເຫດສັນນັ້ນຈົ່ງຫລົບຕັ້ງໃຈໃຫມ່ຈາກການຊົ່ວຂອງເຈົ້ານີ້ ແລະອ້ອນວອນຂໍ ອົງພຣະຜູ້ເປັນເຈົ້າ ເພື່ອຫວັງว่าพระอ็งจะฉ็งยักความผิดบาบที่เจ้าคิดในใจนั้นເສັຍ

ໂຣມ 4:7 ว่า, “ຜູ້ຊຶ່ງໄດ້ຮັບຄວາມອະພັຍແກ່ການລ່ວງລະເມີດຂອງຕົນ ແລະການຜິດບາບ

ຂອງຕົນໄດ້ຊົງໂຜດປົກປັງໄວ້ແລ້ວ ຜູ້ນັ້ນແຫລະ, ເປັນສຸກ

ເອເຟໂຊ 1:7 ໃນພຣະເຢຊູນັ້ນ ພວກເຮົາໄດ້ຮັບການໄຖ່ໃຫ້ພົ້ນດ້ວຍພຣະ�โลหิດຂອງພຣະ ອົງ ຄືໄດ້ຮັບການອະພັຍການຫລົງຜິດຂອງເຮົາ ໂດຍພຣະກະຣຸນາອັນອຸດົມຂອງພວກ ເຈົ້າ

ເອເຟໂຊ 4:32 ຈົ່ງມີໃຈເມດຕາຕໍ່ກັນ ມີໃຈເອັນດູກັນ ແລະອະພັຍໂທດໃຫ້ກັນ ເຫມືອນດັ່ງ ພຣະເຈົ້າໄດ້ຊົງໂຜດອະພັຍໂທດໃຫ້ແກ່ພວກທ່ານໃນອົງພຣະຄຣິດນັ້ນ

�โກ�โลຊາຍ 1:14 ໃນພຣະບຸດນັ້ນເຮົາທັງຫລາຍຈຶ່ງໄດ້ຮັບການໄຖ່ໃຫ້ພົ້ນ ຄືຊົງໂຜດຍົກຜິດ ບາບທັງຫລາຍຂອງພວກເຮົາ

�โກ�โลຊາຍ 2:13-15 ແລະຝ່າຍເຈົ້າທັງຫລາຍທີ່ຕາຍໄປແລ້ວດ້ວຍການຫລົງຜິດຂອງພວກ ເຈົ້າ ແລະດ້ວຍເຫດທີ່ເນື້ອກາຍຂອງພວກເຈົ້າບໍ່ໄດ້ຮັບພິທີຕັດ ພຣະອົງໄດ້ຊົງບັນດານ ໃຫ້ພວກເຈົ້າມີຊີວິດຮ່ວມກັນກັບພຣະອົງ ແລະຊົງໂຜດຍົກ�โทດການຫລົງຜິດທັງຫລາຍ ຂອງພວກເຮົາ 14 ພຣະອົງໄດ້ຊົງລຶບລ້າງຂໍ້ກົດທີ່ຜູກມັດເຮົາດ້ວຍບັນຍັດຕ່າງໆຊຶ່ງຂັດ ຂວາງພວກເຮົານັ້ນ ແລະໄດ້ຊົງຍົກເລີກເສັຍໂດຍຕອກຕິດໄວ້ທີ່ໄມ້ກາງແຂນ 15 ໂດຍໄມ້ ກາງແຂນນັ້ນ ພຣະອົງໄດ້ຊົງປົດຜູ້ປົກຄອງແລະອຳນາດທັງຫລາຍເສັຍ ແລະໄດ້ຊົງປະ ຈານເຂົາຢ່າງເປີດເຜີຍໂດຍນຳເຂົາເປັນຊະເລີຍໃນຂະບວນແຫ່ງຊັຍຊະນະຂອງພຣະອົງ

1 �โยຮັນ 1:9 ຖ້າເຮົາທັງຫລາຍສາຣະພາບຜິດບາບຂອງພວກເຮົາ ພຣະອົງຊົງສັດຊື່ແລະ ທ່ຽງທັມ ຈະຊົງໂຜດຍົກບາບຂອງພວກເຮົາ ແລະຈະຊົງໂຜດຊຳຣະລ້າງເຮົາທັງຫລາຍ ຈາກການອະທັມຫມົດສິ້ນ

1 �โยຮັນ 2:12 ລູກນ້ອຍທັງຫລາຍເອີຍ, ເຮົາຂຽນຈົດຫມາຍເຖິງເຈົ້າທັງຫລາຍ ເພາະວ່າໄດ້ ຊົງໃຫ້ອະພັຍບາບຂອງພວກເຈົ້າແລ້ວ ເພາະເຫັນແກ່ພຣະນາມຂອງພຣະອົງ